ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສາລະວັນ
ພະແນກເຕັກໂນໂລຊີ ແລະ ການສື່ສານ
ຄະນະກຳມະການຄຸ້ມຄອງອິນເຕີເນັດ ແລະ ທັນເປັນດີຈີຕອນ

ເລກທີ: 322
ສາລະວັນ, ວັນທີ: 8.7.2026

# ແຈ້ງການ

ຮຽນ: ບັນດາທ່ານຜູ້ທີ່ນຳໃຊ້ສື່ສັງຄົມອອນລາຍໃນທົ່ວແຂວງສາລະວັນ.

ເລື່ອງ: ເພີ່ມສະຕິ ແລະ ລະມັດລະວັງໃນການນຳໃຊ້ສື່ສັງຄົມອອນລາຍ.

- ອີງຕາມ ກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ ສະບັບເລກທີ 05/ສພຊ, ວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນ ອາຊະຍາກຳທາງລະບົບຄອມພິວເຕີ, ເລກທີ 61/ສພຊ, ວັນທີ 15 ກໍລະກົດ 2015;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງອິນເຕີເນັດ ແລະ ທັນເປັນດີຈີຕອນ ປະຈຳແຂວງສາລະວັນ, ເລກທີ 129/ຄປຂ.ສວ, ວັນທີ 23.12.2025.

ປະຈຸບັນ, ກຸ່ມມິດສາຊີບ ຍັງສືບຕໍ່ເຄື່ອນໄຫວ ແລະ ນຳໃຊ້ກົນອຸບາຍທີ່ຫຼາກຫຼາຍຮູບແບບແນບນຽນໃນການຕົວະຍົວະເອົາຂໍ້ມູນສ່ວນຕົວ ຜ່ານລະບົບໂທລະຄົມ ແລະ ສື່ສັງຄົມອອນລາຍຕ່າງໆ ເພື່ອໃຫ້ເປັນລະຫັດຜ່ານ ແລະ ຢັ້ງຢືນຕົວຕົນໃນການເຂົ້າເຖິງບັນຊີທະນາຄານຂອງທ່ານ ແລ້ວດຳເນີນທຸລະກຳ ຫຼື ໂອນເງິນອອກຈາກບັນຊີ.

ສະນັ້ນ, ເພື່ອເຮັດໃຫ້ການນຳໃຊ້ລະບົບໂທລະຄົມມະນາຄົມ ແລະ ສື່ສັງຄົມອອນລາຍ ມີຄວາມປອດໄພ ແລະ ເປັນການປ້ອງກັນບໍ່ໃຫ້ຕົກເປັນເຫຍື່ອຂອງການຕົວະຍົວະຫຼອກລວງທາງອອນລາຍ. ຄະນະກຳມະການຄຸ້ມຄອງອິນເຕີເນັດ ແລະ ທັນເປັນດີຈີຕອນ ແຂວງສາລະວັນ ຂໍຖືເປັນກຽດແຈ້ງມາຍັງທ່ານ ໃຫ້ເພີ່ມສະຕິ ແລະ ລະມັດລະວັງ ໃນການນຳໃຊ້ລະບົບໂທລະຄົມ ແລະ ສື່ສັງຄົມອອນລາຍ, ປະຕິບັດຕາມຄຳແນະນຳ ດັ່ງນີ້:

1. **ຢ່າຟ້າວຫຼົງເຊື່ອ ແລະ ປະຕິບັດຕາມ:** ຫາກມີບຸກຄົນໃດໜຶ່ງໂທ ຫຼື ສົ່ງຂໍ້ຄວາມຫາ ເພື່ອແຈ້ງໃຫ້ທ່ານ ບອກລະຫັດ OTP -One Time Password, ລະຫັດຜ່ານ (Password), ຂໍ້ມູນບັດປະຈຳຕົວ ຫຼື ສະແກນໃບໜ້າ;
2. **ຢ່າກົດລິ້ງ (Link):** ຫາກໄດ້ຮັບລິ້ງທີ່ສົ່ງມາທາງຂໍ້ຄວາມ (SMS) ຫຼື ສື່ສັງຄົມອອນລາຍ ຈາກແຫຼ່ງທີ່ບໍ່ໜ້າເຊື່ອຖື;
3. **ກວດສອບຄືນ:** ຫາກມີການແອບອ້າງຊື່ບໍລິສັດ ຫຼື ໜ່ວຍງານໃດໜຶ່ງທັງພາກລັດ ແລະ ເອກະຊົນ, ໃຫ້ຕິດຕໍ່ສອບຖາມຜ່ານເບີໂທລະສັບ ຫຼື ເວັບໄຊທາງການ ຂອງໜ່ວຍງານນັ້ນໂດຍກົງ ເພື່ອກວດສອບຄືນ;
4. **ສຶກສາ ແລະ ຕິດຕາມຂ່າວສານ:** ຕິດຕາມຂ່າວສານເລື່ອງຄວາມປອດໄພທາງໄຊເບີ (ຜ່ານເວັບໄຊ ຫຼື ເພສທາງການ) ເພື່ອໃຫ້ຮູ້ທັນກົນອຸບາຍໃໝ່ຂອງກຸ່ມມິດສາຊີບ;
5. ຖ້າພົບເຫັນກໍລະນີສົງໄສ ສາມາດແຈ້ງຂໍ້ມູນ ແລະ ສອບຖາມກັບ ສູນຕ້ານອາຊະຍາກຳທາງອອນລາຍ ເລກໝາຍໂທລະສັບ 1533 ໄດ້ຕະຫຼອດ 24 ຊົ່ວໂມງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ເພີ່ມສະຕິລະມັດລະວັງຕໍ່ກົນອຸບາຍດັ່ງກ່າວ.

ຫົວໜ້າພະແນກ ຕສ ແຂວງສາລະວັນ
(ຮອງຫົວໜ້າພະແນກ ຜູ້ປະຈຳການ)

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງສາລະວັນ

ຈັນຄິດ ແສນທະ.

สแกนด้วย CamScanner